# ບົດຄວາມ,
# “ລະບົບການຊຳລະໃນ ສປປ ລາວ”




ທ່ານຜູ້ອ່ານທີ່ຮັກແພງ ໃນຊີວິດປະຈຳວັນຂອງຄົນເຮົາໃນປະຈຸບັນ ຄົງລີກລ້ຽງບໍ່ໄດ້ຕໍ່ຄວາມກ່ຽວຂ້ອງກັບການຊຳລະເງິນຢູ່ທຸກມື້ ບໍ່ວ່າຈະເປັນການຊຳລະເງິນເພື່ອຊື້ສິນຄ້າ ຫຼື ການບໍລິການ ການໂອນເງິນ ຫຼື ການເຮັດທຸລະກຳທາງການເງິນອື່ນ. ການຂະຫຍາຍຕົວຂອງເສດຖະກິດ ແລະ ຄວາມກ້າວໜ້າຂອງເຕັກໂນໂລຊີ ເປັນປັດໄຈທີ່ສົ່ງຜົນໃຫ້ການບໍລິການດ້ານການຊຳລະເງິນມີຄວາມສະດວກສະບາຍ ແລະ ຫຼາກຫຼາຍ. ການໃຫ້ບໍລິການທີ່ມີຄວາມວ່ອງໄວ ແລະ ສອດຄ່ອງກັບຄວາມຕ້ອງການຂອງທຸລະກິດ, ປະຊາຊົນ ແລະ ມີຜູ້ໃຫ້ບໍລິການໃໝ່ໆເກີດຂຶ້ນ ລວມທັງມີການນຳເອົາຂະບວນການຊຳລະເງິນເຂົ້າໄປໃນລະບົບເອເລັກໂຕຣນິກ ຊຶ່ງທັງໝົດນີ້ກໍເພື່ອ ສ້າງຄວາມສະດວກໃຫ້ແກ່ປະຊາຊົນຜູ້ຊົມໃຊ້ໃນສັງຄົມ. ດັ່ງນັ້ນ, ມື້ນີ້ຖືເປັນໂອກາດອັນດີ ທີ່ຜູ້ຂຽນຂໍນຳສະເໜີກ່ຽວກັບ ລະບົບການຊຳລະທີ່ນຳໃຊ້ໃນ ສປປ ລາວ ສູ່ບັນດາທ່ານໄດ້ຮັບຮູ້.

ທຸລະກຳການຊຳລະ ແມ່ນເກີດຂຶ້ນບົນພື້ນຖານສັນຍາເບື້ອງຕົ້ນ ຕາມກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ເຊັ່ນ: ສັນຍາຊື້-ຂາຍ, ສັນຍາກູ້ຢືມ, ສັນຍາເຊົ່າ, ສັນຍາບໍລິການ ແລະ ອື່ນໆ ຊຶ່ງກໍ່ໃຫ້ເກີດສິດ ແລະ ພັນທະຕໍ່ກັນລະວ່າງຄູ່ສັນຍາ ສະນັ້ນ, ໃນຂັ້ນຕອນການປະຕິບັດສັນຍາຈຶ່ງມີການຊຳລະເກີດຂຶ້ນ ຊຶ່ງເຮົາຈະມາທຳຄວາມເຂົ້າໃຈກ່ຽວກັບ **ການຊຳລະ** ນຳກັນ. **ການຊຳລະ** ແມ່ນ ການຈ່າຍເງິນ ຫຼື ການປົດເປື້ອງໜີ້ສິນບາງສ່ວນ ຫຼື ທັງໝົດ. ໂດຍອີງຕາມກົດໝາຍວ່າດ້ວຍ ລະບົບການຊຳລະ ສະບັບເລກທີ 32/ສພຊ, ລົງວັນທີ 7 ພະຈິກ 2017 ໄດ້ໃຫ້ນິຍາມໃນມາດຕາ 2 ກ່ຽວກັບລະບົບການຊຳລະ ວ່າ “**ລະບົບການຊຳລະ**” ແມ່ນ ການເຄື່ອນໄຫວທັງໝົດກ່ຽວກັບການບໍລິການຊຳລະ ທີ່ປະກອບດ້ວຍ ການສັ່ງຈ່າຍ, ການໂອນ ແລະ ການມອບ-ຮັບ ລະຫວ່າງ ຜູ້ຈ່າຍ ແລະ ຜູ້ຮັບ ດ້ວຍການນຳໃຊ້ເຄື່ອງມືການຊຳລະ ຫຼື ຜ່ານກົນໄກການຊຳລະ ຂອງຜູ້ຄວບຄຸມລະບົບການຊຳລະ ແລະ ຜູ້ໃຫ້ບໍລິການຊຳລະ.

ໃນສະໄໝປັດຈຸບັນ ການຊຳລະ ສາມາດນຳໃຊ້ເຄື່ອງມືທີ່ເປັນເງິນສົດ ແລະ ທີ່ບໍ່ແມ່ນເງິນສົດ ລາຍລະອຽດ ດັ່ງລຸ່ມນີ້:

**ການຊຳລະດ້ວຍເງິນສົດ** ແມ່ນ ການຊຳລະຄ່າ ສິນຄ້າ ແລະ ບໍລິການໂດຍໃຊ້ເງິນສົດ ເປັນເຄື່ອງມືໃນການຊຳລະ ຊຶ່ງມີ ສອງ ພາກສ່ວນພົວພັນກັນ ຕົວຢ່າງ ສັນຍາຊື້-ຂາຍ ປະກອບມີ: ຜູ້ຊື້ ແລະ ຜູ້ຂາຍ ເມື່ອ ຜູ້ຊື້ໄດ້ຊຳລະເງິນ ຄ່າສິນຄ້າ ຫຼື ບໍລິການໃຫ້ແກ່ຜູ້ຂາຍ ແລະ ຜູ້ຂາຍໄດ້ສະໜອງສິນຄ້າ ຫຼື ບໍລິການໃຫ້ຜູ້ຊື້ ແລ້ວ ກໍຖືວ່າການຊຳລະໄດ້ສຳເລັດຢ່າງສົມບູນ.

**ການຊຳລະດ້ວຍເຄື່ອງມືອື່ນທີ່ບໍ່ແມ່ນເງິນສົດ** ແມ່ນ ການຊຳລະຄ່າສິນຄ້າ ແລະ ບໍລິການ ໂດຍການນຳໃຊ້ເຄື່ອງມືການຊຳລະອື່ນໆ ທີ່ບໍ່ແມ່ນເງິນສົດ ເຊັ່ນ: ແຊັກ, ເງິນໂອນ, ບັດ, ເງິນເອເລັກໂຕຣນິກ ໂດຍການເຮັດທຸລະກຳຊຳລະປະເພດນີ້ ນອກຈາກຄູ່ສັນຍາຕົ້ນສອງຝ່າຍຊຶ່ງເປັນຜູ້ໃຊ້ບໍລິການເຂົ້າຮ່ວມແລ້ວ ຍັງມີບົດບາດຂອງຕົວກາງທີ່ເຮັດໜ້າທີ່ໃນການນຳສົ່ງເງິນຈາກຜູ້ຈ່າຍຫາຜູ້ຮັບ ນັ້ນກໍ່ແມ່ນສະຖາບັນການເງິນ ຫຼື ນິຕິບຸກຄົນທີ່ເປັນສື່ກາງ ຊຶ່ງເອີ້ນວ່າ: ຜູ້ໃຫ້ບໍລິການຊຳລະ ແລະ ຜູ້ຄວບຄຸມລະບົບ.

- **ຜູ້ໃຫ້ບໍລິການຊຳລະ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໃນການສະໜອງການບໍລິການຊຳລະ ເປັນຕົ້ນແມ່ນທະນາຄານທຸລະກິດ, ບໍລິສັດໂທລະຄົມມະນາຄົມ, ບໍລິສັດໂອນເງິນດ່ວນ ທີ່ໄດ້ຮັບອະນຸຍາດ;
- **ຜູ້ຄວບຄຸມລະບົບ** ໝາຍເຖິງ ທະນາຄານແຫ່ງ ສປປ ລາວ ຫຼື ນິຕິບຸກຄົນທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃຫ້ດຳເນີນການຄວບຄຸມລະບົບຊຳລະ ເປັນຜູ້ວາງລະບຽບການ, ອອກເຄື່ອງມືຕ່າງໆ ເພື່ອໃຫ້ຜູ້ໃຫ້ບໍລິການນຳໃຊ້.

ໃນສະພາບປັດຈຸບັນທີ່ເຕັກໂນໂລຊີທັນສະໄໝ ມີຫຼາຍຊ່ອງທາງທີ່ຜູ້ຊົມໃຊ້ສາມາດເຂົ້າເຖິງການບໍລິການການຊຳລະໂດຍບໍ່ມີຂອບເຂດຈຳກັດ ຊຶ່ງຜູ້ຊົມໃຊ້ສາມາດປະຕິບັດການຊຳລະຄ່າສິນຄ່າ, ບໍລິການ ແລະ ໜີ້ສິນອື່ນ ຜ່ານລະບົບທະນາຄານ, ໂທລະສັບ ແລະ ອິນເຕີເນັດ ແຕ່ເຖິງຢ່າງໃດກໍ່ດີ ການນຳໃຊ້ຊ່ອງທາງການຊຳລະບາງຊ່ອງທາງກໍ່ມີຄວາມສ່ຽງຕໍ່ການສູນເສຍເງິນຄຳຂອງຜູ້ໃຊ້ບໍລິການ ຫຼື ອາດຈະເຂົ້າສູ່ວົງຈອນການກໍອາຍາກຳຕ່າງໆໂດຍບໍ່ຮູ້ຕົວ ສະນັ້ນ, ຈຶ່ງຮຽກຮ້ອງໃຫ້ຜູ້ຊົມໃຊ້ບໍລິການການຊຳລະ ສຶກສາຜູ້ໃຫ້ບໍລິການກ່ອນ ແລະ ສຶກສາລະບຽບກົດໝາຍໃຫ້ເຂົ້າໃຈກ່ອນຕັດສິນໃຈນຳໃຊ້ບໍລິການ.

**ໂດຍ: ຄຳເປົ້າ ສຸວໍລະວົງ ແລະ ພອນສະນິດ ພິຈິດ**

**(ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ)**